# ຂໍ້ມູນພື້ນຖານກ່ຽວກັບຫມີ
# ໝີດຳອາຊີ ຫຼື ໝີຄວາຍ (Ursus thibetanus)

## ຮູບຮ່າງ ແລະ ລັກສະນະ

- ໝີຄວາຍ ປົກກະຕິແລ້ວຈະມີຂົນສີດຳ ຍາວ  ແລະ ມີສີຂາວ ທີ່ມີລັກສະນະແຕກຕ່າງກັນ ໂດຍລວມແລ້ວ, ເຄື່ອງໝາຍໜ້າເອິກຈະເປັນຮູບສັນຍາລັກພາສາອັງກິດ ຮູບໂຕ V ແລະ ມັກຈະມີຂົນສີຂາວນ້ອຍ ໆ ກ້ອງຄາງຂອງພວກມັນ
- ຫູເປັນຮູບມົນກົມ ແລະ ມີຂະຫນາດໃຫຍ່ກວ່າເມື່ອທຽບກັບຫມີຊະນິດອື່ນ ໆ
- ຫມີສ່ວນຫຼາຍແມ່ນມີສີດຳ, ສ່ວນສີນ້ຳຕານ ຫຼື ສີທອງ, ພົບເຫັນສ່ວນໜ້ອຍ

## ຂະໜາດ

- ໝີຄວາຍ ຈະເປັນໝີທີ່ຂະຫນາດກາງ ໃນບັນດາຕະກຸນໝີ
- ພວກມັນສາມາດຢືນໄດ້ດ້ວຍຂາຫຼັງຂອງພວກມັນ,
ຫມີຄວາຍ ໂຕ່ທີ່ໃຫຍ່ຖ້ວນ ສາມາດຢືນໄດ້ສູງເຖິງ 183 ຊັງຕີແມັດ ຫຼື 6 ຟຸດ
- ເພດຜູ້ ໂຕ່ທີ່ໃຫຍ່ຖ້ວນ ນ້ຳຫນັກຈະມີຢູ່ 100–200kg ແຕ່ປົກກະຕິ ຈະຢູ່ທີ່ 110–150kg
- ເພດແມ່ ໂຕ່ທີ່ໃຫຍ່ຖ້ວນ ນ້ຳຫນັກຈະມີຢູ່ 50–125kg ແຕ່ປົກກະຕິ ຈະຢູ່ທີ່ 65–90kg

## ອາຫານການກິນ

- ໝີຄວາຍ ເປັນສັດທີ່ສາມາດກິນໄດ້ທັງພືດ ແລະ ຊີ້ນທຸກຊະນິດ ລວມທັງໝາກ ໄມ້, ນ້ຳເຜີ້ງ. ຮັງເຜີ້ງ, ແມງໄມ້, ສັດທີ່ບໍ່ມີກະດູກສັນຫຼັງ, ສັດມີກະດູກສັນຫຼັງຂະຫນາດນ້ອຍ, ແລະ ຊາກສັດທີ່ຕາຍແລ້ວ
- ໃນລະດູໃບໄມ້ປົ່ງ, ພວກເຂົາມັກຈະຫັກກິ່ງ, ຫງ່າໄມ້ເພື່ອເຮັດເປັນຮັງ.
- ພວກມັນປຽບເຫມືອນກັບເຄື່ອງຍ່ອຍອາຫານທີ່ບໍ່ຄ່ອຍຈະລະອຽດດີ, ເຊິ່ງຊ່ວຍໃນການກະຈາຍແກ່ນເບ້ຍໄມ້ ແລະ ແກ່ນໝາກໄມ້ຢູ່ໃນປ່າໄມ້ໃນຂົງເຂດທີ່ມັນອາໄສຢູ່

## ຮູບຮ່າງ ແລະ ລັກສະນະ

- ໝີຄວາຍ ປົກກະຕິແລ້ວຈະມີຂົນສີດຳ ຍາວ  ແລະ ມີສີຂາວ ທີ່ມີລັກສະນະແຕກຕ່າງກັນ ໂດຍລວມແລ້ວ, ເຄື່ອງໝາຍໜ້າເອິກຈະເປັນຮູບສັນຍາລັກພາສາອັງກິດ ຮູບໂຕ V ແລະ ມັກຈະມີຂົນສີຂາວນ້ອຍ ໆ ກ້ອງຄາງຂອງພວກມັນ
- ຫູເປັນຮູບມົນກົມ ແລະ ມີຂະຫນາດໃຫຍ່ກວ່າເມື່ອທຽບກັບຫມີຊະນິດອື່ນ ໆ
- ຫມີສ່ວນຫຼາຍແມ່ນມີສີດຳ, ສ່ວນສີນ້ຳຕານ ຫຼື ສີທອງ, ພົບເຫັນສ່ວນໜ້ອຍ



## ສະຖານະພາບ & ໄພຂົ່ມຂູ່

- ໝີຄວາຍຖື ເປັນຊະນິດທີ່ໃກ້ຈະສູນພັນ, ພວກມັນຖືກຈັດເປັນປະເພດເປັນສັດ 'ມີຄວາມສ່ຽງ' ໃນບັນຊີແດງຂອງ IUCN
- ໄພຂົ່ມຂູ່ລວມມີການສູນເສຍທີ່ຢູ່ອາໄສ;ການລັກລອບລ່າສັດປ່າທີ່ຜິດກົດໝາຍການຄ້າ (ຊິ້ນສ່ວນອະໄວຍະວະແລະ ເປັນຢາພື້ນເມືອງ), ກັບດັກແຮ້ວທີ່ນາຍພານໃຊ້ລ່າ, ຂາຍຫມີນ້ອຍ, ສົ່ງຂາຍໄປເປັນ 'ສັດລ້ຽງ' ຕະຫລາດການຄ້າຂາຍສັດປ່າ, ຂໍ້ຂັດແຍ້ງກັນ ລະຫວ່າງຄົນ-ໝີ ແລະ ຟາມເພື່ອດູດເອົາບີຫມີ

## ພຶດຕິກຳ

- ເຖິງແມ່ນວ່າຈະມີຕົນໂຕທີມີຂະຫນາດໃຫຍ່, ແຕ່ພວກມັນແມ່ນນັກປີນຕົ້ນໄມ້ທີ່ເກັ່ງທີ່ສຸດ & ສາມາດປີນສູງທີ່ສຸດເພື່ອຊອກຫານ້ຳເຜີ້ງເທິງຕົ້ນໄມ້
- ພວກເຂົາເຈົ້າມີຄວາມສຸກກັບແມ່ນ້ຳ ແລະ ແຂນຂາທີ່ແຂງແຮງຂອງພວກເຂົາ ສາມາດຮັບປະກັນປຽບເຫມືອນກັບ ນັກລອຍນ້ຳທີ່ດີທີ່ສຸດ
- ການດົມກິ່ນແມ່ນຄວາມຮູ້ສຶກທີ່ຮັບຮູ້ໄດ້ດີທີ່ສຸດ ແລະ ໃຊ້ງານຫລາຍທີ່ສຸດຂອງພວກເຂົາໂດຍລວມມີຄວາມສາມາດຮັບຮູ້ກິ່ນໄດ້ (2–3,000 ເທົ່າເມື່ອທຽບກັບຄົນເຮົາ)

## ການຂະຫຍາຍພັນ

- ໝີຄວາຍ ສາມາດແຜ່ພັນໄດ້ເລີ່ມຈາກອາຍຸ 3–4 ປີ
- ປົກກະຕິມີ 2–3 ໂຕ.
ຫມີຈະເຊົາກິນນົມແມ່ ໂດຍສະເລ່ຍອາຍຸ 6 ເດືອນ, ແຕ່ຈະອາໄສຢູ່ກັບແມ່ຢ່າງຫນ້ອຍຈະໃຊ້ເວລາ 2–3 ປີ
- ເຊື່ອກັນວ່າອາຍຸຂອງມັນຢູ່ໄດ້ດົນເຖິງ 25–35 ປີ
- ໝີຄວາຍມັກຈະຢູ່ແບບໂດດດ່ຽວໃນປ່າ

## ສາລະຫນ້າຮູ້

- ໝີຄວາຍ ຫລື Moon Bears ມີຊື່ຮຽກເອີ້ນຕາມຮູບເຄື່ອງຫມາຍທີ່ຫນ້າເອິກຄ້າຍຄືຮູບດວງຈັນ
- ທຸກສັນຍາລັກທີ່ຫນ້າເອິກແມ່ນເປັນເອກະລັກສະເພາະຂອງໂຕນັ້ນ ໆ , ຄືກັບລາຍນິ້ວມືທີ່ພິມໄວ້
- ໝີຄວາຍສາມາດຍ່າງສອງຂາໄດ້ ແລະ ໄດ້ດົນ, ລວມເຖິງການຍ່າງໃນໄລຍະທາງໄກ
- ເປັນທີ່ຫນ້າເສົ້າໃຈ: ໝີຄວາຍ ແມ່ນຖືກນຳມາໃຊ້ທົ່ວໄປໃນການລ້ຽງເພື່ອດູດເອົານ້ຳບີ, ໂດຍສະເພາະ ຟາມບີໝີ ແລະ ເພື່ອສະແດງລະຄອນສັດ

FREETHEBEARS

# ຂໍ້ມູນພື້ນຖານກ່ຽວກັບຫມີ
# ໝີເໝືອຍ ຫຼື ຫມີແສງຕາເວັນ ມາລາຢັນ (Helarctos malayanus)

### ຮູບຮ່າງ ລັກສະນະ
- ໝີເໝືອຍ ມີລໍາຕົວສັ້ນ, ເງົາງາມ ມີຂົນຫຸ້ມຮ່າງກາຍເປັນສີດໍາ ແລະ ມີຂົນສີເຫຼືອງແສດອ້ອມຕາ, ບໍລິເວນໃບຫນ້າ. ກາງໜ້າເອິກຈະມີເຄື່ອງໝາຍຄ້າຍກັບຮູບດວງຕາເວັນສີເຫຼືອງແສດ.
- ພວກມັນມີເລັບຍາວທີ່ແຫຼມຄົມ & ເມື່ອພວກມັນໃຫຍ່ຂຶ້ນຕີນຂອງມັນຈະປິ່ນໜ້າເຂົ້າຫາກັນເໝາະສໍາລັບການປີນຕົ້ນໄມ້
- ພວກມັນມີລີ້ນທີ່ຍາວທີ່ສຸດຂອງບັນດາພັນຫມີທັງຫມົດ

### ຂະໜາດ
- ໝີເໝືອຍ ເປັນໝີທີ່ນ້ອຍທີ່ສຸດໃນບັນດາຕະກຸນຫມີທັງໝົດ
- ມັນສາມາດຢືນຂຶ້ນດ້ວຍສອງຂາຫຼັງຂອງມັນ, ຕົວທີ່ໃຫຍ່ທີ່ສຸດ, ເມື່ອຢືນຂຶ້ນຈະມີຄວາມສູງເຖິງ 145 ຊັງຕີແມັດ.
- ໂຕທີ່ໃຫຍ່ເຕັມໄວຈະມີນໍ້າໜັກຢູ່ທີ່ 25–80 ກິໂລກຣາມ
- ໂຕຜູ້ ຈະໃຫຍ່ກວ່າໂຕແມ່ປະມານ 10–20%

### ອາຫານການກິນ
- ຫມີເໝືອຍ ເປັນສັດທີ່ສາມາດກິນໄດ້ທັງພືດ, ຊີ້ນທຸກຊະນິດ, ກິນປ່ວກ, ມົດ, ດ້ວງ, ຕົວອ່ອນຂອງເຜີ້ງ & ນໍ້າເຜີ້ງເປັນຫລັກເຊັ່ນດຽວກັນກັບອາຫານຫລັກຊະນິດອື່ນ ໆ ເຊັ່ນ: ຫມາກໄມ້, ໂດຍສະເພາະໝາກເດື່ອ.
- ບາງຄັ້ງພວກມັນກໍ່ຈະກິນທັງຍອດຕາວ ແລະ ດອກໄມ້ບາງຊະນິດ, ແຕ່ພືດອື່ນ ໆ ແມ່ນຫາຍາກໃນບັນດາອາຫານຂອງເຂົາ

### ເຂດທີ່ພົບເຫັນ & ທີ່ຢູ່ອາໄສ
- ຫມີເໝືອຍ ພົບເຫັນໃນບັນດາ 11 ປະເທດເຂດອາຊີໃຕ້-ບັງກະລາເທດ,,ບຣູໄນ, ຈີນ, ກໍາປູເຈຍ, ອິນເດຍ, ອິນໂດເນເຊຍ, ລາວ, ມາເລເຊຍ, ມຽນມາ, ໄທ, ຫວຽດນາມ
- ພວກເຂົາເຈົ້າມັກຈະດໍາລົງຊີວິດອາໄສຢູ່ໃນປ່າໄມ້ທີ່ບໍ່ຖືກລົບກວນ
- ຫາກມີອາຫານທີ່ສົມບູນໃນສະພາບອາກາດທີ່ອົບອຸ່ນຕະຫຼອດປີ, ພວກເຂົາບໍ່ຈໍາເປັນທີ່ຈະຕ້ອງຈໍາສິນ



### ສະຖານະພາບ & ໄພຂົ່ມຂູ່
- ເຫມືອຍ ເປັນສັດຊະນິດຫນຶ່ງທີ່ໃກ້ຈະສູນພັນ, ຖືກຈັດຢູ່ໃນປະເພດເປັນ “ສັດທີ່ມີຄວາມສ່ຽງ” ໃນບັນຊີແດງຂອງ IUCN
- ໄພຂົ່ມຂູ່ ລວມມີການສູນເສຍແຫລ່ງທີ່ຢູ່ອາໄສ; ການລັກລອບລ່າສັດປ່າທີ່ຜິດກົດໝາຍການຄ້າຂາຍສັດປ່າ (ຊີ້ນສ່ວນອະໄວຍະວະ ແລະ ນໍາໄປເປັນຢາພື້ນເມືອງ), ກັບດັກແຮ້ວຂອງນາຍພານ, ຫມີນ້ອຍທີ່ໄດ້ມາຈະຂາຍໄປໃຫ້ກັບພໍ່ຄ້າເພື່ອນໍາໄປເປັນ “ສັດລ້ຽງ”

### ພຶດຕິກໍາ
- ໝີເໝືອຍ ໃຊ້ເວລາສ່ວນຫຼາຍຢູ່ເທິງຕົ້ນໄມ້, ເຮັດໃຫ້ມັນເປັນໝີປະເພດໜຶ່ງທີ່ອາໄສຢູ່ເທິງຕົ້ນໄມ້ເປັນສ່ວນໃຫຍ່
-ກຸນແຈຫລັກຄືພວກມັນມີສ່ວນຊ່ວຍໃນການກະຈາຍເມັດພືດ, ຂຸດ ແລະ ຈີກຂອນໄມ້ທີ່ໂດກ (ໃນການຫາອາຫານ ເຊັ່ນ, ປວກ, ແມງໄມ້), ແລະ ບົດໃຫ້ເປັນປຸຍ, ລວມທັງເປັນການສ້າງແຫລ່ງທີ່ຢູ່ອາໄສໃຫ້ກັບສັດຊະນິດອື່ນ ໆ ອີກດ້ວຍ.

### ການປະສົມພັນ
- ເໝືອຍ ບໍ່ຄືກັບຫມີຊະນິດອື່ນ ໆ , ຫມີເໝືອຍແຜ່ພັນໄດ້ຕະຫຼອດປີ
- ແມ່ໝີສາມາດມີລູກນ້ອຍໄດ້ເຖິງ 1–2 ໂຕ. (ປະມານ 325gm) ແລະ ຈະຢູ່ໃນຊ່ວງທີ່ບໍ່ແຕກຕາ & ບໍ່ມີຂົນຫຸ້ມຜິວຫນັງ ເກືອບໝົດທັງໂຕ
-ລູກໝີນ້ອຍ ຈະໃຊ້ເວລາ 2–3 ປີ ໃນການຕິດຕາມຢູ່ກັບແມ່ຂອງພວກມັນ
-ໂດຍລວມແລ້ວ ເຊື່ອກັນວ່າອາຍຸຂອງໝີເໝືອຍສາມາດຢູ່ໄດ້ດົນເຖິງ 15–25 ປີ

### ສາລະໜ້າຮູ້
- ແຂ້ວຂອງໝີເຫມືອຍຈະມີຂະຫນາດດຽວກັນກັບແຂ້ວຂອງຫມີຂົ້ວໂລກ
- ຫມີດວງຕາເວັນ ຫລື ໝີເຫມືອຍ ຈະສ້າງ 'ຮັງ' ຢູ່ເທິງຕົ້ນໄມ້ ແລະ ມັກຈະນອນຢູ່ຮັງຂອງພວກມັນ
- ຫມີດວງຕາເວັນ ຫລື ໝີເຫມືອຍ ຍັງເປັນທີ່ຮູ້ຈັກກັນດີ ຄືເປັນໝີ 'ນໍ້າເຜີ້ງ', ຍ້ອນພວກມັນມັກກິນນໍ້າເຜີ້ງຫລາຍ
- ທຸກ ໆ ສັນຍາລັກຕາມໜ້າເອິກ, ແມ່ນເປັນເອກະລັກສະເພາະຕົວຂອງມັນ

FREETHEBEARS